ບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ
PETROLEUM TRADING LAO PUBLIC COMPANY
ຖະໜົນ: ກຳແພງເມືອງ, ບ້ານໂພນທັນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສ ປ ປ ລາວ ໂທ: 856 21 264834-5 ແຟັກ: 856021 264836
Kampheangmueng Rd, Phonthan Village, Xaysettha District, Vientiane Capital, Lao P.D.R, Tel: 856 21 264834-5, Fax: 856021 264836

ເລກທີ: 140 .....ປທລ/2025

ນະຄອນຫຼວງວຽງຈັນ, ວັນທີ 27 / 08 / 2025

ຮຽນ: ທ່ານ ຫົວໜ້າສຳນັກງານ ຄະນະກຳມະການຄຸ້ມຄອງຫລັກຊັບ ທີ່ນັບຖືຢ່າງສູງ.
ທ່ານ ຜູ້ອຳນວຍການໃຫຍ່ ຕະຫຼາດຫຼັກຊັບລາວ ທີ່ນັບຖືຢ່າງສູງ.
ບັນດາ ທ່ານ ຜູ້ຖືຮຸ້ນ ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ

ເລື່ອງ: ລາຍງານການເປີດເຜີຍຂໍ້ມູນປະຈຳ 6 ເດືອນຕົ້ນ ປີ 2025 ລ່າຊ້າ.

- ອີງຕາມຂໍ້ຕົກລົງວ່າດ້ວຍການລາຍງານ ແລະ ເປີດເຜີຍຂໍ້ມູນ ຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ (ສະບັບປັບປຸງ) ສະບັບເລກທີ 15/ຄຄຊ, ລົງວັນທີ 11 ທັນວາ 2024.
- ອີງຕາມ ລະບຽບວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 008/ຕລຊລ, ລົງວັນທີ 26 ພະຈິກ 2018.
- ອີງຕາມ ແຈ້ງການກ່ຽວກັບການເປີດເຜີຍຂໍ້ມູນ ປະຈຳ 6 ເດືອນຕົ້ນປີ 2025 ຂອງ ບໍລິສັດຈົດທະບຽນ ໃນ ຕລຊລ ສະບັບເລກທີ 1144/ຕລຊລ, ລົງວັນທີ 13 ສິງຫາ 2025;

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ("ບໍລິສັດ" ຫຼື "ປທລ") ຂໍຖືເປັນກຽດ ລາຍງານມາຍັງທ່ານຊາບວ່າ: ບໍລິສັດ ປທລ ບໍ່ສາມາດເປີດເຜີຍຂໍ້ມູນຕາມຮອບວຽນບັນຊີ ປະຈຳ 6 ເດືອນຕົ້ນປີ 2025 ເປັນຕົ້ນ ບົດລາຍງານງາຍການເຄື່ອນໄຫວທຸລະກິດ ແລະ ເອກະສານລາຍງານການເງິນ ປະຈຳ 6 ເດືອນຕົ້ນປີ ໄດ້ທັນຕາມວັນເດັດຖານ ວັນທີ 29 ສິງຫາ 2025. ເນື່ອງຈາກວ່າ ບໍລິສັດກຳລັງຢູ່ໃນການປັບປ່ຽນລະບົບບັນຊີເພື່ອເພີ່ມປະສິດທິພາບຂອງລະບົບ ໃຫ້ສາມາດຮອງຮັບການເຕີບໂຕຂອງບໍລິສັດ ເຮັດໃຫ້ການສັງລວມຂໍ້ມູນມີຄວາມລ່າຊ້າ.

ສະນັ້ນ, ບໍລິສັດ ຈະຮີບຮ້ອນແກ້ໄຂບັນຫາທີ່ໄດ້ກ່າວ ມາຂ້າງນີ້ໃຫ້ສຳເລັດ ແລະ ຄາດວ່າຈະສາມາດເປີດເຜີຍຂໍ້ມູນຕາມ ຮອບວຽນບັນຊີ ປະຈຳ 6 ເດືອນຕົ້ນປີ 2025 ໄດ້ໃນລະຫວ່າງວັນທີ 15-17 ເດືອນ ກັນຍາ 2025 ນີ້.

ດັ່ງນັ້ນ, ຈຶ່ງຮຽນລາຍງານມາຍັງທ່ານ ເພື່ອພິຈາລະນາຕາມຄວາມເໝາະສົມດ້ວຍ.

ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ,

ຮອງປະທານສະພາບໍລິຫານ

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ Petroleum Trading Lao Public Company

ຄຳຍອນ ສິດທິໄຊ

ຕິດຕໍ່ ໂທ 020 55559043 FAX: 021-264836